ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໙/ປພຖຊ/໐ມີມ໑໐໙**

# ບົດຄວາມ

## ພັກຣັດໂກງຊາດ ໂກງປະຊາຊົນ

ການສໍ້ໂກງຂາຍຊາດ ຂາຍປະຊາຊົນ ຂອງພັກຣັດວຽງຈັນ ໃນປະຈຸບັນນີ້, ໄດ້ນຳພັຍພິບັດ ອັນໃຫຍ່ຫລວງ ມາສູ່ຊາດແລະປະຊາຊົນ ຢ່າງໜ້າເປັນຫ່ວງ ແລະວິຕິກເຫລືອທີ່ສຸດ!.– ພັກຣັດ ໄດ້ພັທນາ ໃຫ້ກາຍເປັນ ວັທນະທັມໃໝ່, **ວັທນະທັມ ແຫ່ງການໂກງກິນຊາດ**, ໃຫ້ເປັນທີ່ ນິຍົມ ຊົມຊອບກັນ ຢ່າງກວ້າງຂວາງທົ່ວປະເທດ; ໂດຍສະເພາະຢູ່ກົງຈັກການປົກຄອງ ຂອງພັກຣັດ ໃນທຸກໆຣະດັບ.

ສິ່ງທີ່ໜ້າເປັນຫ່ວງແລະ ວິຕິກທີ່ສຸດນັ້ນ ກໍຄື: ການສົ່ງເສີມ ໃຫ້ພນັກງານພັກຣັດ ໄດ້ເຂົ້າຮ່ວມກັນ ສໍ້ໂກງກິນຊາດຢ່າງເປັນຂບວນ... ຖ້າຜູ້ໃດ ບໍ່ຍອມກະທຳນຳ, ກໍຖືກປົດເຊັ່ຽອອກ ຈາກໜ້າທີ່ການໄປ. ຕົວຢ່າງ ຢູ່ໃນແຂວງພາກເໜືອຂອງລາວ, ບໍຣິສັດຈີນ, ເມື່ອພວກເຂົາ ສຳຣວດເຫັນດິນຕອນໃດ, ພູໜ່ວຍໃດ ມີທາດແຮ່ໂລຫະ, ພວກເຂົາກໍຊື້ເອົາໝົດໜ່ວຍພູນັ້ນໂລດ! ດ້ວຍການຊື້ຈ້າງ, ໃຫ້ສິນບົນ ພນັກງານ ໃນພແນກການ ທີ່ກ່ຽວຂ້ອງນັ້ນໝົດທຸກໆຄົນ!. ຜູ້ທີ່ບໍ່ເຫັນດີນຳນັ້ນ, ກໍຖືກຜູ້ເປັນນາຍ ໄລ່ອອກ ຈາກວຽກງານນັ້ນໄປ... ການສົ່ງເສີມ ພນັກງານ ທຸກຄົນ ໃຫ້ເຂົ້າຮ່ວມ ຂບວນການຂາຍຊາດ ຄືແນວນີ້, ແນ່ນອນວ່າ ອີກບໍ່ດົນ!...–ຊາດລາວ ກໍຕ້ອງສູນເສັ້ຽໄປ ຢ່າງໜ້າເສົ້າສລົດໃຈທີ່ສຸດ!...

ເມື່ອການໂກງກິນຊາດ ໄດ້ແຜ່ລາມ ຂື້ນມາຮອດຈຸດນີ້ແລ້ວ, ມັນກໍຊີ້ໃຫ້ເຫັນ ຢ່າງຈະແຈ້ງທີ່ສຸດ! ວ່າ "**ພັກຣັດ ມີເຈຕນາຂາຍຊາດ ຂາຍປະຊາຊົນ ຢ່າງແທ້ຈິງ**".- ສນັ້ນ, ພັກຣັດຈຶ່ງບໍ່ມີຄຸນສົມບັດ ທີ່ຈະເປັນ ຣັຖບານ ບໍຣິຫານປະເທດຊາດອີກຕໍ່ໄປແລ້ວ!.- ຖ້າຫາກ ພັກຣັດຍັງມີນໍ້າໃຈ ຮັກຊາດເພງເຊື້ອ ຫລົງເຫລືອຢູ່... ແນ່ນອນວ່າ ການສໍ້ໂກງກິນຊາດ ກໍຈະຫລຸດຜ່ອນລົງ ແລະຜູ້ກະທໍາຜິດ ຕ້ອງຖືກນໍາມາລົງໂທດໄດ້. ຫລາຍທ່ານ ກໍໄດ້ອອກມາຍອມຮັບຄວາມຫລົ້ມເຫລວ ໃນການປະຕິບັດ ກົດໝາຍ ຕ້ານການສໍ້ຣາດ ບັງຫລວງນັ້ນໆ... ເປັນຕົ້ນ:

- ທ່ານ ສົມດີ ດວງດີ, ຣັຖມົນຕຣີກະຊວງການຄັງ ກໍອອກມາຍອມຮັບວ່າ "ພັກຣັດຂາດດູນໃນປີ 2006-2007 ມີເຖິງ 2 ພັນລ້ານກີບ, ຍ້ອນມີການສໍ້ຣາດບັງຫລວງ ຢູ່ໃນກົງຈັກຣັຖບານທັງພາສີຣາຍໄດ້ ຣາຍຈ່າຍ ເຖິງ 70%.
- ທ່ານ ທອງວັນ ແສງອາພອນ ຣັຖມົນຕຣີປ້ອງກັນຄວາມສງົບ ໄດ້ອອກມາກ່າວ ຊ້ອງໜ້າກອງປະຊຸມ ລະລຶກ ວັນຄົບຮອບ 4 ປີ ແຫ່ງການເຊັນສັນຍາ ຕ້ານການສໍ້ຣາດບັງຫລວງຮ່ວມກັບອົງການ ສະຫະປະຊາຊາດ ວ່າ"ການສໍ້ຣາດບັງຫລວງ ຂອງຄນະພັກຣັດ ມັນໄດ້ເປັນພັຍຊົ່ມຂູ່ ຕໍ່ແຜນພັທນາເສຖກິດ ແລະສັງຄົມ ຢ່າງໃຫຍ່ຫລວງ. ພ້ອມດຽວກັນ, ທ່ານກໍໄດ້ຮຽກຮ້ອງ ໃຫ້ນໍາເອົາຜູ້ກະທໍາຜິດ ມາລົງໂທດ ຂັ້ນເດັດຂາດ, ເພື່ອເຮັດໃຫ້ການຄຸ້ມຄອງຣັດ, ຄຸ້ມຄອງສັງຄົມ ຕາມກົດໝາຍນັ້ນ ມີຄວາມສັກສິດຂື້ນ.
- ທ່ານ ອ້ວນສີ ຮອງຜູ້ກວດກາແຫ່ງຣັດ, ຍອມຮັບວ່າ ຣາຍໄດ້ໃນປີ 2007 ຖືກສໍ້ໂກງໄປບໍ່ຕໍ່າກວ່າ 100 ພັນລ້ານກີບ(ຮ້ອຍຕື້ກີບ). ທັງນີ້, ກໍຍ້ອນວ່າ ການປະຕິບັດກົດໝາຍປາບການສໍ້ຣາດບັງຫລວງ ທີ່ ໄດ້ເຂົ້າຮ່ວມເປັນພາຄີ ຂອງອົງການສະຫະປະຊາຊາດນັ້ນ, ພັກຣັດບໍ່ສາມາດ ນໍາເອົາ ຜູ້ກະທໍາຜິດ ມາລົງໂທດໄດ້.
- ທ່ານ ອາສັງ ລາວລີ, ທ່ານ ບຸນຍັງ ວໍຣະຈິດ ແລະທ່ານພັນໂທ ດວງໃຈພິຈິດກໍໄດ້ອອກມາກ່າວ ເຊັ່ນດຽວ ເຖິງຄວາມຫລົ້ມເຫລວ ໃນການປາບປາມ ການສໍ້ຣາດບັງຫລວງ. ພັກຣັດ ບໍ່ສາມາດ ທີ່ຈະນໍາເອົາ ຜູ້ກະທໍາຜິດ ມາລົງໂທດໄດ້.

ໃນເມື່ອພັກຣັດ, ເວົ້າແນວນຶ່ງ, ແຕ່ຊໍ້າພັດເຮັດໄປອີກແນວນຶ່ງ, ໂດຍການໃຊ້ແຜນຍຸທສາດ "**ເທັດ ເປັນຈິງ-ຈິງ ເປັນເທັດ**" ເພື່ອຕົວະຍົວະຫລອກລວງຕ່າງຊາດ ໃຫ້ຫລົງກົນແລະສືບຕໍ່ ໃຫ້ການ ຊ່ວຍເຫລືອ ເພື່ອລ້ຽງປາກລ້ຽງທ້ອງ ແລະກໍ່ສ້າງສັງຄົມນິຍົມ ໃຫ້ພວກເຂົາສືບຕໍ່ໄປ.

ສນັ້ນ, ພວກເຮົາ ປະຊາຊົນພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ ຈຶ່ງຮຽກຮ້ອງມາຍັງອົງການ ຈັດຕັ້ງສາກົນ, ບັນດາປະເທດທີ່ໃຫ້ການຊ່ວຍເຫລືອ, ຕລາດຮ່ວມຢູຣົບ, ສະມາຄົມເອຊຽນ ຕລອດຮອດ ສະຖານະການເງິນຕ່າງໆໃນໂລກ ໂດຍ ສະເພາະ ທະນາຄານໂລກ,

ທະນາຄານພັທນາເອເຊັຽ, ຈິ່ງໄດ້ຢຸດຕິ ໃຫ້ ການຊ່ວຍເຫລືອລາວ ອີກຕໍ່ໄປ...ເພາະການຊ່ວຍເຫລືອຕ່າງໆນັ້ນ ມັນໄດ້ສົ່ງເສີມ ໃຫ້ມີການສໍ້ໂກງ ກິນຊາດ ແຜ່ລາມອອກໄປຢ່າງກວ້າງຂວາງ ໃນທົ່ວປະທດ ຊຶ່ງເປັນພັຍອັນໃຫຍ່ຫລວງ ມາສູ່ຊາດ ແລະ ປະຊາຊົນ. ມັນບໍ່ໄດ້ນຳໄປສູ່ການແກ້ໄຂຄວາມຍາກຈົນຂອງຊາດ ຂອງປະຊາຊົນ ຕາມເປົ້າໝາຍ ຂອງການຊ່ວຍເຫລືອທີ່ຕ້ອງການໃຫ້ຄົນລາວພົ້ນທຸກນັ້ນ ແຕ່ຢ່າງໃດເລີຍ!. ຕຣົງກັນຂ້າມ, ມັນໄດ້ໄປສ້າງຮັ່ງຄູນມີໃຫ້ແກ່ສ່ວນບຸກຄົນ ໃນຄນະຣັຖບານ ຜູ້ມີອຳນາດອິດພິພົນເທົ້ານັ້ນເອງ.

ມີແຕ່ບີບຣັດ ໃຫ້ພັກຣັດປ່ຽນຣັຖບານເທົ້ານັ້ນ, ຈຶ່ງຈະປາບປາມ ການໂກງກິນຊາດ ກິນປະຊາຊົນ ແລະແກ້ໄຂ ຄວາມຍາກຈົນ ຂອງຊາດ ຂອງປະຊາຊົນລາວ

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໓໑ ມີນາ ໒໐໐໗**